//

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------000000-------------

ບໍລິສັດ ອີທີແອລ ມະຫາຊົນ

ພະແນກ ບໍລິຫານ

ວັນທີ 27 MAR 2013

# ບົດສະຫຼຸບ

ແຜນວຽກປະຈຳອາທິດ ແລະ ທິດທາງແຜນການປະຕິບັດວຽກອາທິດຕໍ່ໄປ ຂອງພະແນກ ບໍລິຫານ

## V. ວຽກທີ່ປະຕິບັດໃນອາທິດຜ່ານມາ:

ວຽກຫ້ອງການ:

- ສຳເລັດການແຈກຢາຍເງິນຍາມປະຈຳເດືອນ 02 ປີ 2013.
- ແກ້ໄຂເອກະສານປະຈຳວັນ, ເອກະສານເບີກຈ່າຍ, ຂໍ້ຕົກລົງ.
- ຈັດຫ້ອງປະຊຸມ, ເພື່ອອຳນວຍຄວາມສະດວກໃຫ້ແກ່ການປະຊຸມຈຳນວນ.
- ຈັດສົ່ງເຄື່ອງ ຫຼື ອຸປະກອນຕ່າງໆໃຫ້ບັນດາ ສາຂາແຂວງ ອທອຈຳນວນ 5ຄັ້ງ.
- ໄດ້ລົງຕິດຕາມຄະດີຄົນຮ້າຍລັກຕັດສາຍກາບຢູ່ຫຼັກ 21 ແລະ ຢູ່ບ້ານສົມປະເສີດ ເມືອງປາກງື່ມ.

ວຽກງານຄຸ້ມຄອງຊັບສິນ:

- ຕິດຕາມໃສ່ລະຫັດຊັບສິນເກີດຂຶ້ນໃໝ່ໃນເດືອນ.
- ເບີກຈ່າຍປະຈຳວັນບັດ, ເຄື່ອງສົ່ງເສີມການຂາຍ, ອຸປະກອນຕິດຕັ້ງ.
- ສຳເລັດການຈ່າຍພາສີດິນສົກປີ 2013 ພາກເໜືອ: ພູຄູນ ສາເລັດ 90%
  ນ້ຳຖ້ວມ ສາເລັດ 90%
  ເມືອງຮຸນ ສຳເລັດ 95%
  ເມືອງສິງ ສຳເລັດ 95%
  ຫຼວງນ້ຳທາ ສຳເລັດ 80%
  ປາກລາຍ ສຳເລັດ 90%.
- ສຳເລັດການເຮັດບັນທຶກການລັກຕັດສາຍກາບຢູ່ບ້ານພ້າວ.

ວຽກງານຄຸ້ມຄອງພາຫະນະ:

- ຈັດພາຫະນະຮັບໃຊ້ວຽກ ຕາມການສະເໜີຂອງ ແຕ່ລະພະແນກການ.
- ເບີກຈ່າຍ ແລະ ຄຸ້ມຄ້ອງນ້ຳມັນເຊື້ອໄຟ ແລະ ບຳລຸງຮັກສາ ພາຫະນະທີ່ເປ່ເພ.

ວຽກງານຈັດຊື້:

- ການຈັດຊື້ອຸປະກອນສຳຮອງ ລະບົບ Microwave SDH ຈຳນວນ 04 Hop ແມ່ນຢູ່ໃນຂັ້ນຕອນລໍຖ້າເປີດຊອງ.
- ການຈັດຊື້ Software License ຂອງລະບົບສາຍສົ່ງ PTN ນຳບໍລິສັດ Huawei ແມ່ນເຮັດສັນຍາແລ້ວ.
- ການຈັດຊື້ Payment Gateway System ແມ່ນຕໍ່ລອງລາຄາແລ້ວ. ຢູ່ໃນຂັ້ນຕອນເຮັດສັນຍາ.
- ການຈັດຊື້ ອຸປະກອນຮັບ-ສົ່ງສັນຍານ 3G (3G Node B) ຈຳນວນ 30 ຊຸດ ແມ່ນຕໍ່ລອງລາຄາແລ້ວ ຢູ່ໃນຂັ້ນຕອນລາຍງານຜົນການຕໍ່ລອງຫາ ຄະນະກຳມະການຜູ້ບໍລິຫານ.
- ການຈັດຊື້ ອຸປະກອນຮັບ-ສົ່ງສັນຍານ 3G NodeB ແລະ 2G NodeB ຈຳນວນ 100 ຊຸດ ແມ່ນຢູ່ໃນຂັ້ນຕອນມອບໃຫ້ພະແນກ ໂທລະສັບມືຖື, ພພທ ແລະ ໄອຊີທີ ຄົ້ນຄ້ວາດ້ານສະເປັກເຕັກນິກ.
- ການສ້ອມແປງອຸປະກອນວັດແທກ VSAT ແລະ STD-A ແມ່ນຢູ່ໃນຂັ້ນຕອນລໍຖ້າເປີດຊອງທາບທາມລາຄາ.

- ການຈັດຊື້ ແຜ່ນ Broad ເຄື່ອງ BTS & BSC ASB ແມ່ນຢູ່ໃນຂັ້ນຕອນຂໍລາຄາກັບບໍລິສັດ Alcatel Shnghi bell.
- ການຈັດຊື້ ລາງວັນສໍາລັບແຜນສົ່ງເສີມການຂາຍໂຊກ 3ຊັ້ນ ພາກ 2.
- ການຈັດຊື້ ຖົງຫົ່ມນ້ອຍ, ເສື້ອ, ໝວກ.

<u>ວຽກກໍ່ສ້າງຕິດຕັ້ງ</u>:

- ການກໍ່ສ້າງ ແລະ ຕິດຕັ້ງໄຟຟ້າ ຢູ່ແຂວງ ຫົວພັນ ຈໍານວນ 07 ສະຖານີ ຕໍ່ລອງລາຄາແລ້ວ. ຢູ່ໃນຂັ້ນຕອນເຮັດສັນຍາ (ແຂວງເຮັດສັນຍາເອງ).
- ການກໍ່ສ້າງ ແລະ ຕິດຕັ້ງໄຟຟ້າ ຢູ່ແຂວງຜົ້ງສາລີ ຈໍານວນ 05 ສະຖານີ, ຕໍ່ລອງລາຄາແລ້ວ. ຢູ່ໃນຂັ້ນຕອນເຮັດສັນຍາ (ແຂວງເຮັດສັນຍາເອງ).
- ການກໍ່ສ້າງສະຖານີ BTS ຢູ່ເຂື່ອນໄຟຟ້າ ນໍ້າອູ 5, ແຂວງຜົ້ງສາລີ, ຕໍ່ລອງລາຄາແລ້ວ. ຢູ່ໃນຂັ້ນຕອນເຮັດສັນຍາ (ແຂວງເຮັດສັນຍາເອງ).
- ການກໍ່ສ້າງ ແລະ ຕິດຕັ້ງໄຟຟ້າ ຢູ່ແຂວງຜົ້ງສາລີ ຈໍານວນ 10 ສະຖານີ, ຕໍ່ລອງລາຄາແລ້ວ. ຢູ່ໃນຂັ້ນຕອນເຮັດສັນຍາ (ແຂວງເຮັດສັນຍາເອງ, ໃບສະເໜີ ສະບັບເລກທີ: 579/ອທອ.ຜລ, ລົງວັນທີ: 04/07/2012).
- ການຕິດຕັ້ງໄຟຟ້າເຂົ້າສະຖານີ BTS ເມືອງຊໍາເໜືອ ແລະ ນໍ້າເນີນ ແຂວງ ຫົວພັນ ແມ່ນຢູ່ໃນຂັ້ນຕອນລໍຖ້າເປີດຊອງທາບທາມລາຄາ (ມອບໃຫ້ ອທອ ສາຂາ ແຂວງ ທາບທາມລາຄາຢູ່ແຂວງເລີຍ).
- ການປັບປຸງ, ບໍາລຸງຮັກສາ, ສ້ອມແປງ ແລະ ຕິດຕັ້ງສາຍໃຍແກ້ວ ແມ່ນຕໍ່ລອງລາຄາແລ້ວ. ຢູ່ໃນຂັ້ນຕອນເຮັດສັນຍາ.
- ການຕິດຕັ້ງສາຍໃຍແກ້ວຢູ່ແຂວງ ວຽງຈັນ ແລະ ແຂວງ ຜົ້ງສາລີ ແມ່ນແຕ່ງຕັ້ງຄະນະຮັບຜິດຊອບແລ້ວ ຢູ່ໃນຂັ້ນຕອນຄົ້ນຄ້ວາ ແລະ ປຶກສາຫາລື.
- ການແຍກອຸປະກອນ BTS ETL ອອກຈາກ BTS MOD ແມ່ນເຮັດສັນຍາແລ້ວ ຢູ່ໃນຂັ້ນຕອນດໍາເນີນການກໍ່ສ້າງ.
- ການຖອນມ້າງ, ຍົກຍ້າຍ, ຕິດຕັ້ງ BTS ຈໍານວນ 16 ສະຖານີ ແມ່ນເຮັດສັນຍາແລ້ວ.
- ການກໍ່ສ້າງ-ຕິດຕັ້ງໄຟຟ້າ ຢູ່ແຂວງ ຊຽງຂວາງ ຈໍານວນ 04 ສະຖານີ ແມ່ນຢູ່ໃນຂັ້ນຕອນລໍຖ້າເປີດຊອງທາບທາມລາຄາ (ມອບໃຫ້ ອທອ ສາຂາ ແຂວງ ທາບທາມລາຄາຢູ່ແຂວງເລີຍ. (ໃບສະເໜີ ສະບັບເລກທີ: 0046/ພພທ.ອທອ, ລົງວັນທີ: 01/02/2013)).
- ການກໍ່ສ້າງ-ຕິດຕັ້ງໄຟຟ້າ ຢູ່ແຂວງ ອັດຕະປື ຈໍານວນ 07 ສະຖານີ ແມ່ນມອບໃຫ້ ອທອ ສາຂາ ແຂວງ ທາບທາມລາຄາຢູ່ແຂວງເລີຍ. ຢູ່ໃນຂັ້ນຕອນເຮັດສັນຍາ (ໃບສະເໜີ ສະບັບເລກທີ: 067/ອປ.ອທອ, ລົງວັນທີ: 05/02/2013).

<u>ວຽກນໍາເຂົ້າ</u>:

## <u>ແຜນວຽກອາທິດຕໍ່ໄປ:</u>

- ສືບຕໍ່ ລົງເຮັດສັນຍາເຝົ້າຍາມ ແລະ ອານາໄມ BTS ແລະ RSU ປະຈໍາປີ 2013.
- ສືບຕໍ່ ຈັດພິທີມອບເຄື່ອງອຸປະຖໍາ, ເງິນອຸປະຖໍາໃຫ້ແກ່ພາກສ່ວນພາຍນອກ.
- ສືບຕໍ່ໃສ່ລະຫັດຊັບສິນທີ່ເກີດຂຶ້ນໃໝ່ ແລະ ສືບຕໍ່ຮັບເຂົ້າ-ຈ່າຍອອກ ບັດ, ຊິມ, ເຄື່ອງສົ່ງເສີມການຂາຍ.
- ໄປສໍາຫຼວດວັດແທກດິນ ອທອ ຢູ່ແຂວງ ຜົ້ງສາລີ.
- ສະເໜີຜ່ານແບບ ຕໍ່ເຕີມອາຄານຫ້ອງການ ຢູ່ແຂວງຫຼວງພະບາງ.
- ສະເໜີຜ່ານແບບ ຕົບແຕ່ງຫ້ອງການ ຢູ່ແຂວງຫົວພັນ.
- ໄປກວດກາການກໍ່ສ້າງ ອາຄານຫ້ອງການ ສອງຄອນ, ຄົງເຊໂດນ ແລະ ເມືອງດັກຈຶງ(ກວດກາ 100%).

- ການຈັດຊື້ ອຸປະກອນສຳຮອງອຸປະກອນສື່ສານ ແມ່ນຢູ່ໃນຂັ້ນຕອນລາຍງານຜົນການຕໍ່ລອງລາຄາ.
- ການຈັດຊື້ ອຸປະກອນສຳຮອງ ລະບົບ Micro wave ແມ່ນຢູ່ໃນຂັ້ນຕອນລາຍງານຜົນການຕໍ່ລອງລາຄາ.
- ສືບຕໍ່ການຮ່ວມມືຂະຫຍາຍເຄືອຂ່າຍ FTTX, Wireless Internet ແລະ FIWI Internet ແມ່ນຢູ່ໃນຂັ້ນຕອນລໍຖ້າ ບໍລິສັດ ສິງລາວ, ບໍລິສັດ ລາວໝັ້ນຄົງ ແລະ ບໍລິສັດ Wiltelcom ສັງລວມ ແລະ ສົ່ງຂໍ້ມູນທັງໝົດໃນການຮັບຜິດ ຊອບໃນການລົງທຶນ, ການບຳລຸງຮັກສາ ແລະ ແບ່ງປັນລາຍຮັບ ຂອງທັງສອງຝ່າຍໃນການຮ່ວມທຶນ.
- ສືບຕໍ່ ການຈັດຊື້ MCPA 150W ຈຳນວນ 30 ຊຸດ ແມ່ນເຮັດສັນຍາແລ້ວ.
- ສືບຕໍ່ ການຈັດຊື້ Telephony ຍີ່ຫໍ້ ICOM ຈຳນວນ 02 ຄູ່ ແມ່ນຢູ່ໃນຂັ້ນຕອນແຕ່ງຕັ້ງຄະນະຮັບຜິດຊອບ.
- ການຈັດຊື້ ແອເຢັນແຍກສ່ວນ 12000 BTU ແມ່ນຢູ່ໃນຂັ້ນຕອນເຮັດສັນຍາ.
- ສືບຕໍ່ການຈັດຊື້ເຄື່ອງມືປ້ອງກັນແຮງງານແມ່ນຢູ່ໃນຂັ້ນຕອນສັ່ງພິມ.

## VI. ວຽກຕາມບົດບັນທຶກສ່ອງແສ່ງ:

## VII. ວຽກຄ້າງ:

## VIII. ຂໍ້ສະເໜີ:

- ທາງພະແນກ ບໍລິຫານ ສະເໜີຂັ້ນເທິງມີທິດຊີ້ນຳກ່ຽວກັບບຸນປີໃໝ່ລາວ.

ຫົວໜ້າພະແນກ

ບຸນມີ ສຸພັນນະລົງ